ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 20 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 19 ມັງກອນ 2012

# ດຳລັດ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ

- ອີງຕາມ ກົດໝາຍສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003 ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ;
- ອີງຕາມ ລັດຖະດຳລັດ ຂອງປະທານປະເທດ ແຫ່ງ ສປປ ລາວ ສະບັບເລກທີ 107/ປປທ, ລົງວັນທີ 30 ມິຖຸນາ 2011 ກ່ຽວກັບໂຄງປະກອບກົງຈັກ, ການແຕ່ງຕັ້ງນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ ແລະ ຄະນະລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;
- ອີງຕາມ ດຳລັດ ສະບັບເລກທີ 406/ນຍ, ລົງວັນທີ 8 ພະຈິກ 2011, ວ່າດ້ວຍຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກຕົກຄ້າງ ຢູ່ໃນ ສປປ ລາວ;
- ອີງຕາມ ໜັງສືສະເໜີ ຂອງລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ, ຫົວໜ້າຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ສະບັບເລກທີ 494 /ຄພທຊ, ລົງວັນທີ 09 ຕຸລາ 2011;
- ອີງຕາມ ໜັງສືສະເໜີຂອງລັດຖະມົນຕີວ່າການກະຊວງພາຍໃນ ສະບັບເລກທີ 159/ພນ, ລົງວັນ ທີ 22 ພະຈິກ 2011.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ກຳນົດກ່ຽວກັບທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ລະບອບແບບແຜນວິທີເຮັດວຽກ ຂອງຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ເພື່ອເປັນບ່ອນອີງດ້ານນິຕິກຳ ສຳລັບຈັດຕັ້ງ ແລະ ເຄື່ອນ ໄຫວຂອງ

ຄະນະດັ່ງກ່າວ ແລະ ແນໃສ່ການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ ແລະ ລັດ
ຖະບານ ກ່ຽວກັບວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ ແລະ ລຶບລ້າງຄວາມ
ທຸກຍາກ ທົ່ວປະເທດ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ.**

ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ຊຽນເປັນຕົວອັກ
ສອນຫຍໍ້ວ່າ **"ຄ.ພ.ທ.ສ"** (ຂຽນເປັນພາສາອັງກິດ **National Committee for Rural**
**Development and Poverty Eradication "NRDPE"**) ແມ່ນຄະນະໜຶ່ງ ທີ່ສັງກັດໃນໂຄງ
ປະກອບກົງຈັກຂອງ ຫ້ອງວ່າການລັດຖະບານ, ມີພາລະບົດບາດ ເປັນເສນາທິການຊ່ວຍກົມການ
ເມືອງ ແລະ ລັດຖະບານ; ເປັນຜູ້ຄົ້ນຄ້ວານະໂຍບາຍ, ແຜນການ,ໂຄງການ ແລະ ເປັນຜູ້ປະສານ
ງານໃນການຄົ້ນຄ້ວາ ແລະ ຈັດຕັ້ງປະຕິບັດ ວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນ
ນະບົດ, ລຶບລ້າງຄວາມທຸກຍາກ ແລະ ແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ
ຕາມດຳລັດ ສະບັບເລກທີ 406/ນຍ, ລົງວັນທີ 8 ພະຈິກ 2011.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

3.1 ຄົ້ນຄວ້າ, ປະສານງານ ກັບພາກສ່ວນທີ່ກ່ຽວຂ້ອງ ໃນການກຳນົດນະໂຍບາຍ, ສ້າງແຜນຍຸດທະ ສາດ,
ແຜນການໄລຍະຍາວ, ໄລຍະກາງ ແລະ ປະຈຳປີ ກ່ຽວກັບວຽກງານກໍ່ສ້າງຮາກຖານການເມືອງ,
ພັດທະນາຊົນນະບົດ, ລຶບລ້າງຄວາມທຸກຍາກ ແລະ ແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່
ສປປ ລາວ ເພື່ອນຳສະເໜີລັດຖະບານພິຈາລະນາ;

3.2 ສົມທົບ, ຊຸກຍູ້ກັບບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຫັນເອົາທິດທາງ ຂອງພັກ
ແລະ ນະໂຍບາຍຂອງລັດຖະບານ ລວມມີແຜນພັດທະນາເສດຖະກິດ-ສັງຄົມ, ຍຸດທະສາດ ເພື່ອ
ການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ແລະ ເປົ້າໝາຍ ສະຫັດສະວັດ ແຫ່ງການ
ພັດທະນາ(MDGs) ໃຫ້ກາຍເປັນແຜນງານ, ໂຄງການລະອຽດ ເພື່ອສຸມໃສ່ກໍ່ສ້າງຮາກຖານ
ການເມືອງ, ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ ຕາມຄາດ
ໝາຍທີ່ພັກ ແລະ ລັດຖະບານວາງອອກ;

3.3 ປະສານສົມທົບກັບບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ, ອົງການຈັດຕັ້ງສັງຄົມ ທັງພາຍ
ໃນ ແລະ ຕ່າງປະເທດສຸມໃສ່ການຈັດຕັ້ງປະຕິບັດວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາ
ຊົນນະບົດ, ລຶບລ້າງຄວາມທຸກຍາກ ແລະ ແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ.
ຕາມຈຸດສຸມບຸລິມະສິດ ຂອງລັດຖະບານ ແລະ ຂອງທ້ອງຖິ່ນ ໃຫ້ເປັນເອກະພາບ ໄປລວງດຽວກັນ
ແລະ ມີປະສິດທິພາບສູງ;

3.4 ຄົ້ນຄວ້າ, ສັງລວມ, ຈັດລຽງບູລິມະສິດ ບັນດາໂຄງການລົງທຶນຂອງລັດ, ທຶນຊ່ວຍເຫຼືອລ້າ ແລະ
ທຶນກູ້ຢືມຈາກຕ່າງປະເທດ ກ່ຽວກັບວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ,

ລຶບລ້າງຄວາມທຸກຍາກ ແລະ ແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສ ປປ ລາວ. ສະເໜີກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ຈັດສັນທຶນເຂົ້າໃນວຽກງານດັ່ງກ່າວ ເພື່ອນຳສະເໜີ ລັດຖະບານອະນຸມັດ ແລະ ສະພາແຫ່ງຊາດຮັບຮອງ;

3.5 ປະສານສົມທົບກັບບັນດາຂະແໜງການເພື່ອລະດົມແຫຼ່ງທຶນ ແລະ ຍາດແຍ່ງການສະໜັບສະໜູນ ຊ່ວຍເຫຼືອດ້ານທຶນຮອນ, ເຕັກນິກວິຊາການ ແລະ ບົດຮຽນຈາກບັນດາປະເທດ, ອົງການຈັດຕັ້ງສາກົນ, ພາກສ່ວນຕ່າງໆ ພາຍໃນ ແລະ ຕ່າງປະເທດເຂົ້າໃນວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ, ລຶບລ້າງຄວາມທຸກຍາກ ແລະ ແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ.

3.6 ພົວພັນ, ຮ່ວມມື ກັບສາກົນແບບສອງຝ່າຍ ແລະ ຫຼາຍຝ່າຍ ທັງເປັນຜູ້ປະສານງານກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກອາຊຽນ;

3.7 ປະສານກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຕິດຕາມ, ກວດກາ, ປະເມີນຄວາມທຸກຍາກ ແລະ ການພັດທະນາ ໃນທຸກໆປີ. ກຳນົດຈຸດສຸມບູລິມະສິດ ໃນການພັດທະນາ ແລະ ແກ້ໄຂຄວາມທຸກຍາກໃຫ້ຖືກຕ້ອງສອດຄ່ອງກັບສະພາບຄວາມເປັນຈິງ; ສ້າງ, ປັບປຸງຖານຂໍ້ມູນ, ສະໜອງ ແລະ ເຜີຍແຜ່ຂໍ້ມູນດັ່ງກ່າວ ໃຫ້ແກ່ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ;

3.8 ປະສານສົມທົບກັບບັນດາກະຊວງ, ອົງການທຽບເທົ່າ ແລະ ທ້ອງຖິ່ນ, ຄົ້ນຄວ້າຈັດສັນພູມລຳເນົາຄົງທີ່, ບ່ອນທຳມາຫາກິນແບບຖາວອນ ແລະ ອາຊີບທີ່ໝັ້ນທ່ຽງໃຫ້ປະຊາຊົນ;

3.9 ປະສານສົມທົບກັບບັນດາກະຊວງ, ອົງການທຽບເທົ່າ ແລະ ທ້ອງຖິ່ນ, ຊຸກຍູ້, ສົ່ງເສີມ ແລະ ຄຸ້ມຄອງວຽກງານກອງທຶນພັດທະນາຂັ້ນບ້ານ ແລະ ກອງທຶນຕ່າງໆ ຍົກລະດັບເປັນສະຫະກອນສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ;

3.10 ປະສານສົມທົບກັບບັນດາກະຊວງ, ອົງການທຽບເທົ່າ ແລະ ທ້ອງຖິ່ນ, ຊີ້ນຳ, ຕິດຕາມ ແລະ ຊຸກຍູ້ກອງທຶນຫຼຸດຜ່ອນຄວາມທຸກຍາກ, ທະນາຄານນະໂຍບາຍ ແລະ ສະຖາບັນການເງິນຈຸລະພາກຕ່າງໆ ໃນການຈັດຕັ້ງປະຕິບັດໂຄງການແກ້ໄຂຄວາມທຸກຍາກ ແລະ ປ່ອຍສິນເຊື່ອໃຫ້ຖືກບູລິມະສິດ;

3.11 ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຄຸ້ມຄອງ ແລະ ຈັດຕັ້ງການເຄື່ອນໄຫວ, ການປັບປຸງລະບົບການເມືອງ ຢູ່ທ້ອງຖິ່ນຮາກຖານ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງທາງດ້ານການເມືອງແນວຄິດ, ການຈັດຕັ້ງ ແລະ ການເຄື່ອນໄຫວຕາມພາລະບົດບາດ;

3.12 ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການປັບປຸງ, ກໍ່ສ້າງ, ຍົກລະດັບໃຫ້ແກ່ພະນັກງານກໍ່ສ້າງຮາກຖານການເມືອງ, ນັກພັດທະນາກອນ ແລະ ພະນັກງານກັບທີ່ໃຫ້ຂັ້ນບ້ານ;

3.13 ຄຸ້ມຄອງ, ນຳໃຊ້, ປະຕິບັດນະໂຍບາຍ, ປະຕິບັດວິໄນຕໍ່ພະນັກງານລັດຖະກອນ ຕາມລະບຽບການກຳນົດ;

3.14 ສະຫຼຸບ, ສັງລວມສະພາບການຈັດຕັ້ງປະຕິບັດວຽກງານ ກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ, ລຶບລ້າງຄວາມທຸກຍາກ ແລະ ແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ແຕ່ລະໄລຍະ;

3.15 ຂຶ້ນແຜນງົບປະມານປະຈໍາປີ, ຄຸ້ມຄອງ, ນໍາໃຊ້ງົບປະມານ ແລະ ຊັບສິນບັດຂອງລັດ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນຕາມລະບຽບການ;

3.16 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 4. ຂອບເຂດສິດ**

4.1 ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ, ລະບຽບການ ແລະ ມາດຕະການຕ່າງໆ ທີ່ນອນຢູ່ໃນພາລະບົດບາດ ແລະ ໜ້າທີ່ຂອງຕົນ;

4.2 ແຕ່ງຕັ້ງ, ຄຸ້ມຄອງ, ຝຶກອົບຮົມ, ບໍາລຸງ, ກໍ່ສ້າງ, ສັບຊ້ອນ, ເລື່ອນຊັ້ນ-ຂັ້ນ, ຍ້ອງຍໍ ແລະ ປະຕິບັດວິໄນຕໍ່ພະນັກງານລັດຖະກອນຕາມລະບຽບການກໍານົດ;

4.3 ຕົກລົງສ້າງຕັ້ງ, ປັບປຸງ ແລະ ຍົກເລີກໜ່ວຍງານສະເພາະກິດຂອງຫ້ອງການ, ໂຄງການທີ່ຂຶ້ນກັບຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ;

4.4 ພົວພັນ, ປະສານສົມທົບບັນດາກະຊວງ, ອົງການທຽບເທົ່າ, ອົງການຈັດຕັ້ງສາກົນ ແລະ ທ້ອງຖິ່ນ ເພື່ອພ້ອມກັນຈັດຕັ້ງປະຕິບັດນະໂຍບາຍ, ລະບຽບກົດໝາຍ ແລະ ຄໍາສັ່ງຂອງຂັ້ນເທິງ ກ່ຽວກັບວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ, ລຶບລ້າງຄວາມທຸກຍາກ ແລະ ແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ;

4.5 ພົວພັນ, ເຈລະຈາ, ເຊັນສັນຍາ, ອະນຸສັນຍາ ແລະ ບົດບັນທຶກຕ່າງໆ ກັບພາຍໃນ ແລະຕ່າງປະເທດກ່ຽວກັບວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ, ລຶບລ້າງຄວາມທຸກຍາກ ແລະ ແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ;

4.6 ດໍາເນີນການກວດກາ, ປະເມີນຄວາມທຸກຍາກ ແລະ ການພັດທະນາໃນແຕ່ລະໄລຍະ ກ່ຽວກັບວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ, ລຶບລ້າງຄວາມທຸກຍາກ ແລະ ແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ;

4.7 ຄຸ້ມຄອງ, ນໍາໃຊ້ງົບປະມານ ແລະ ຊັບສິນບັດຂອງລັດ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນຕາມລະບຽບການ;

4.8 ເຊີນພາກສ່ວນທີ່ກ່ຽວຂ້ອງຈາກຂະແໜງການ ແລະ ທ້ອງຖິ່ນ ເພື່ອປຶກສາຫາລື ກ່ຽວກັບວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ, ລຶບລ້າງຄວາມທຸກຍາກ ແລະ ແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ;

4.9 ເຂົ້າຮ່ວມກອງປະຊຸມພາຍໃນ ຫຼື ຕ່າງປະເທດ ທີ່ພົວພັນກັບພາລະບົດບາດ ແລະ ໜ້າທີ່ຂອງຕົນຕາມການເຊື້ອເຊີນ;

4.10 ປະຕິບັດສິດອື່ນໆ ຕາມການມອບໝາຍຂອງລັດຖະບານ.

# ໝວດທີ III
# ໂຄງປະກອບການຈັດຕັ້ງ

**ມາດຕາ 5. ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກ ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ປະກອບດ້ວຍ 04 ຫ້ອງການຄື:

1. ຫ້ອງການ ຈັດຕັ້ງ-ບໍລິຫານ;
2. ຫ້ອງການ ສັງລວມວຽກງານກໍ່ສ້າງຮາກຖານການເມືອງ;
3. ຫ້ອງການສັງລວມ ວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ;
4. ຫ້ອງການ ແຜນການ ແລະ ພົວພັນຕ່າງປະເທດ.

- ນອກນີ້, ຍັງມີກອງທຶນຫຼຸດຜ່ອນຄວາມທຸກຍາກ, ຫ້ອງການຄະນະກຳມະການຄຸ້ມຄອງ ແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ. "ຄຊກລ" ແລະ ໂຄງການອື່ນໆທີ່ສັງກັດກັບ.
- ຢູ່ທ້ອງຖິ່ນ: ມີຫ້ອງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນແຂວງ (ມີຖານະທຽບເທົ່າພະແນກສາຍຕັ້ງ) ແລະ ຫ້ອງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມ ທຸກຍາກຂັ້ນເມືອງ (ທຽບເທົ່າຫ້ອງການສາຍຕັ້ງ)

**ມາດຕາ 6. ໂຄງປະກອບບຸກຄະລາກອນ**

**6.1** ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ປະກອບມີລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ ໜຶ່ງທ່ານເປັນຫົວໜ້າ ແລະ ມີຮອງຈຳນວນໜຶ່ງ.

ຫົວໜ້າຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ ເປັນຜູ້ຮັບຜິດຊອບໂດຍກົງ ຕໍ່ຄະນະເລຂາທິການສູນກາງພັກ ແລະ ລັດຖະບານ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງ ໃນການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະ ໜ້າທີ່, ຂອບເຂດສິດ ທີ່ກຳນົດໃນມາດຕາ **3** ແລະ **4** ຂອງດຳລັດສະບັບນີ້.

ຮອງຫົວໜ້າຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ ໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງຄະນະຈັດຕັ້ງສູນກາງພັກ; ຮອງຫົວໜ້າຄະນະເປັນຜູ້ຊ່ວຍຫົວໜ້າຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ ແລະ ລົງເລິກຊີ້ນຳຊີ້ເຂດວຽກງານໃດໜຶ່ງ ຕາມການແບ່ງງານຂອງຫົວໜ້າຄະນະ.

**6.2** ປະກອບມີບັນດາຫົວໜ້າຫ້ອງການ ແລະ ຮອງຫົວໜ້າຫ້ອງການ ຊຶ່ງມີຕຳແໜ່ງບໍລິຫານ ປະເພດ 2 ແລະ 3 ຕາມລຳດັບ.

ບັນດາຫົວໜ້າຫ້ອງການ ໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງຫົວໜ້າຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ ແລະ ຄະນະຈັດຕັ້ງສູນກາງພັກ. ເປັນຜູ້ຮັບຜິດຊອບໂດຍກົງຕໍ່ຫົວໜ້າຄະນະພັດທະນາ

ຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະ ໜ້າທີ່, ຂອບເຂດສິດ ຂອງຫ້ອງການຕົນ.

ບັນດາຮອງຫົວໜ້າຫ້ອງການ ໄດ້ຮັບແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຫົວໜ້າຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ຕາມລະບຽບການ; ຮອງຫົວໜ້າຫ້ອງການ ເປັນຜູ້ຊ່ວຍຫົວໜ້າຫ້ອງການ ແລະ ລົງເລິກຊີ້ນຳເຂດວຽກງານໃດໜຶ່ງ ຕາມການແບ່ງ ງານຂອງຫົວໜ້າຫ້ອງການ;

6.3 ສຳລັບບຸກຄະລາກອນຂອງຫ້ອງການຄະນະກຳມະການຄຸ້ມຄອງ ແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ "ຄຊກລ" ແມ່ນປະຕິບັດຕາມ ມາດຕາ 04 ຂອງດຳລັດ 406/ນຍ, ລົງວັນທີ 8 ພະຈິກ 2011.

6.4 ມີບັນດາພະນັກງານ-ລັດຖະກອນ, ນັກວິຊາການທີ່ສັງກັດຢູ່ໃນຫ້ອງການຕ່າງໆຕາມການກຳນົດຕຳແໜ່ງງານ.

## ໝວດທີ IV
## ຫຼັກການ ແລະ ລະບອບແບບແຜນວິທີເຮັດວຽກ

### ມາດຕາ 7. ຫຼັກການ

ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ ເຄື່ອນໄຫວວຽກງານຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ແລະ ປະຕິບັດລະບອບຫົວໜ້າດຽວແບ່ງຄວາມຮັບຜິດຊອບໃຫ້ບຸກຄົນຢ່າງຈະແຈ້ງ, ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານລັດຖະກອນເພື່ອປະກອບສ່ວນເຂົ້າໃນວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ, ລຶບລ້າງຄວາມທຸກຍາກ ແລະ ແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ.

### ມາດຕາ 8. ແບບແຜນວິທີເຮັດວຽກ

8.1 ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການ; ແກ້ໄຂວຽກຢ່າງມີຈຸດສຸມ; ຖືເອົາການພົວພັນປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ເປັນຫລັກເພື່ອດຳເນີນການກ່ຽວກັບວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ, ລຶບລ້າງຄວາມທຸກຍາກ ແລະ ວຽກງານ ແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ.

8.2 ເຮັດວຽກໂດຍມີການຕິດຕາມ, ກວດກາ, ຊຸກຍູ້, ສະຫຼຸບປະເມີນຜົນ ແລະ ຖອດຖອນບົດຮຽນ ເປັນປະຈຳ;

8.3 ປະຕິບັດລະບອບສ່ອງແສງ, ລາຍງານປະຈຳອາທິດ, ປະຈຳເດືອນ, ງວດ ແລະ ປະຈຳປີ ຂອງຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ໃຫ້ລັດຖະບານເປັນປົກກະຕິ.

## ໝວດທີ V

## ບົດບັນຍັດສຸດທ້າຍ

**ມາດຕາ 9. ງົບປະມານ ແລະ ຕາປະທັບ**

ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ມີງົບປະມານ ແລະ ຕາປະທັບ ເພື່ອຮັບໃຊ້ວຽກງານລັດຖະການ ຂອງຕົນ.

**ມາດຕາ 10. ການຜັນຂະຫຍາຍ**

ມອບໃຫ້ຫົວໜ້າຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ຜັນຂະຫຍາຍ ກຳນົດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງແຕ່ລະຫ້ອງການທີ່ຂຶ້ນກັບເປັນອັນລະອຽດ.

**ມາດຕາ 11. ການຈັດຕັ້ງປະຕິບັດ**

ຄະນະເລຂາທິການສູນກາງພັກ, ຫ້ອງວ່າການລັດຖະບານ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງຂັ້ນທ້ອງຖິ່ນ ແລະ ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດເລກທີ 60/ນຍ, ລົງວັນທີ 24 ມັງກອນ 2007.

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ